# ການເຂົ້າເຖິງນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ຂອງຫົວໜ່ວຍວິສາຫະກິດ ກໍລະນີສຶກສາ 03 ແຂວງພາກເໜືອ ຄື: ແຂວງຊຽງຂວາງ, ແຂວງຫົວພັນ ແລະ ແຂວງໄຊສົມບູນ

**ຜູ້ຂຽນ: ສຸວັນທອນ ບູ່ພະລາ[1], ເສີມ ບົວດອກທອງ, ນຸດຕາ ທອງມະນີ,**

**ຟອງສະໝຸດ ແກ້ວພິມມາ, ສຸກສະຫວັນ ພົມມະວົງ**

*ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

[1] ***ຜູ້ຮັບຜິດຊອບ:*** *ສຸວັນທອນ ບູ່ພະລາ, ສະຖາບັນການທະນາຄານ, ທະນາຄານ ແຫ່ງ ສປປ ລາວ*

ການສຶກສາຄົ້ນຄວ້າຄັ້ງນີ້ໄດ້ຄົ້ນຄວ້າການເຂົ້າເຖິງນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນຂອງຫົວໜ່ວຍວິສາຫະກິດ 03 ແຂວງພາກເໜືອ ຄື: ແຂວງຊຽງຂວາງ, ແຂວງຫົວພັນ ແລະ ແຂວງໄຊສົມບູນ ເຊິ່ງມີຈຸດປະສົງການຄົ້ນຄວ້າແມ່ນ ສະພາບລວມການເຂົ້າເຖິງນະໂຍບາຍສິນເຊື່ອ, ປັດໄຈທີ່ສົ່ງຜົນຕໍ່ການເຂົ້າເຖິງສິນເຊື່ອ ແລະ ບັນຫາຂອງການເຂົ້າເຖິງນະໂຍບາຍສິນເຊື່ອ ຂໍ້ມູນທີ່ນໍາໃຊ້ໃນການສຶກສາຄັ້ງນີ້ແມ່ນໄດ້ມາຈາກການເຮັດແບບສອບຖາມດ້ວຍການສໍາພາດ, ໂດຍວິເຄາະສະຖິຕິພັນລະນາ ແລະ ໃຊ້ແບບຈໍາລອງ Logistics Regression Model ເພື່ອຫາຄວາມສໍາພັນຂອງປັດໄຈທີ່ມີຜົນການເຂົ້ານະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນ, ຜົນການຄົ້ນຄວ້າພົບວ່າ: ການເຂົ້າເຖິງນະໂຍບາຍສິນເຊື່ອຂອງຫົວໜ່ວຍທຸລະກິດ ກວມອັດຕາສ່ວນຫຼາຍທີ່ສຸດແມ່ນບໍ່ເຂົ້າເຖິງນະໂຍບາຍສິນເຊື່ອ(ບໍ່ໄດ້ກູ້ຢືມ) ຍ້ອນເຫດຜົນຂອງຜູ້ສະເໜີກູ້ ແລະ ຜູ້ໃຫ້ກູ້ ເຊິ່ງກວມອັດຕາສ່ວນ 50.56 % ຫຼື ເທົ່າກັບ 90 ຫົວໜ່ວຍວິສາຫະກິດ ແລະ ເຂົ້າເຖິງນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນ 49.44 %, ຈຸດປະສົງຂອງການເຂົ້າເຖິງນະໂຍບາຍສິນເຊື່ອຂອງຫົວໜ່ວຍທຸລະກິດເພື່ອຂະຫຍາຍທຸລະກິດຂອງຕົນເອງກວມອັດຕາສ່ວນຫຼາຍທີ່ສຸດ ກວມເອົາ 82.95 %, ເຊິ່ງປັດໄຈທີ່ມີຜົນຫຼາຍທີ່ສຸດຕໍ່ການເຂົ້າເຖິງນະໂຍບາຍສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ແມ່ນຄວາມຕ້ອງເງິນທຶນຂອງຫົວໜ່ວຍວິສາຫະກິດມາເສີມຂະຫຍາຍທຸລະກິດຂອງຕົນໃຫ້ເຕີບໃຫຍ່ຂະຫຍາຍຕົວ ມີຄ່າສະເລ່ຍເທົ່າກັບ 4.54 ແລະການທົດສອບແບບຈໍາລອງຂອງບັນດາຕົວປ່ຽນໃນແບບຈໍາລອງທີ່ມີຜົນຕໍ່ການເຂົ້າເຖິງນະໂຍບາຍສິນເຊື່ອ ມີ 4 ຕົວປ່ຽນຄື: ເພດ (Sex), ອາຍຸ (Age), ທຶນຈົດທະບຽນ (Re), ຖານະທາງການເງິນ (Fin) ທີ່ມີການພົວພັນໃນທິດທາງດຽວກັນກັບການເຂົ້າເຖິງນະໂຍບາຍສິນເຊື່ອ ເຊິ່ງມີລະດັບຄວາມສໍາຄັນທາງສະຖິຕິ 0.01 ແລະ 0.1 ຫຼື ດ້ວຍລະດັບຄວາມເຊື່ອໝັ້ນ 99% ແລະ 90%. ບັນຫາທີ່ເປັນອຸປະສັກຕໍ່ການເຂົ້ານະໂຍບາຍສິນເຊື່ອ ຄື: 1) ຜູ້ໃຫ້ກູ້ ແມ່ນ ການໃຫ້ຂໍ້ມູນຂອງພະນັກງານທະນາຄານທຸລະກິດ ແລະ ກອງທຶນພັດທະນາທີ່ບໍ່ຊັດເຈນ ມີຄ່າສະເລ່ຍເທົ່າກັບ 4.81, 2) ຜູ້ສະເໜີຂໍກູ້ (ຫົວໜ່ວຍວິສາຫະກິດ) ແມ່ນ ບໍ່ໄດ້ຮັບຂໍ້ມູນຂ່າວສານກ່ຽວນະໂຍບາຍສິນເຊື່ອເພື່ອກະຈ່າຍແຫຼ່ງທຶນມີຄ່າສະເລ່ຍເທົ່າກັບ 4.79.

# Access to credit policy to spread capital sources to the locality of enterprise units. Case study 03 Northern provinces namely: Xiengkhouang, Huaphan and Xayombon provinces

This study investigated the access to credit policies to distribute capital to the local level of business units in 03 northern provinces: Xiengkhouang, Houaphanh and Xaysomboun. The research objectives are to examine the overall situation of access to credit policies, factors affecting access to credit, and problems with access to credit policies. The data used in this study were obtained from a questionnaire with interviews, analyzed by descriptive statistics and used the Logistic Regression Model to find the relationship between factors that affect access to credit policies to distribute capital. The results of the study found that: Access to credit policies of business units accounts for the largest proportion of not accessing credit policies (not borrowing) due to reasons from borrowers and lenders, which accounts for 50.56% or 90 business units, and access to credit policies to distribute capital 49.44%. The purpose of accessing credit policies of business units to expand their own businesses accounts for the largest proportion, accounting for 82.95%. The most effective factor in accessing credit policies to distribute capital to the local level is the need for funds by business units to expand their businesses to grow, with an average value of 4.54 and model testing of variables in the model that affect access to credit policies. There are 4 variables: Sex, Age, Registered Capital (Re), Financial Status (Fin) that are related in the same direction with access to credit policies with a statistical significance level of 0.01 and 0.1 or with a confidence level of 99% and 90. The problems that hinder access to credit policies are 1) Lenders are unclear information provided by commercial bank and development fund employees with an average value of 4.81, 2) Borrowers (enterprise units) are not provided with information about credit policies to provide sources of capital with an average value of 4.79.

**Keywords:** Factor, Access to credit policies, The problem of credit policy.